**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 0878 /ກປຝ
ນະຄອນຫຼວງວຽງຈັນ, ວັນທີ 20 APR 2023

**ຄຳແນະນຳ**
**ກ່ຽວກັບ ເງື່ອນໄຂສຸຂານາໄມພືດ ສຳລັບການສົ່ງອອກສາລີ**
**ຈາກ ສປປ ລາວ ໄປ ສປ ຈີນ**

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ແລະ ການກັກກັນພືດ ເລກທີ 13/ສພຊ, ລົງວັນທີ່ 15 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ ສະບັບ ເລກທີ 0078/ກປ, ລົງວັນທີ 12 ມັງກອນ 2022;
- ອີງຕາມ ບົດບັນທຶກ ກ່ຽວກັບ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການສົ່ງອອກສາລີຈາກ ສປປ ລາວ ໄປ ສປ ຈີນ, ລົງວັນທີ 10 ມັງກອນ 2012;

ໃນໄລຍະຜ່ານມາ ລັດຖະບານ ໄດ້ມີນະໂຍບາຍສົ່ງເສີມການຜະລິດພືດເປັນສິນຄ້າ ເຮັດໃຫ້ມີການແລກປ່ຽນຄ້າຂາຍຜະລິດຕະພັນສິນຄ້າກະສິກຳ ກັບພາກພື້ນ ແລະ ສາກົນ ນັບມື້ນັບເພີ່ມຂຶ້ນ. ໃນນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ລົງນາມ ຮ່ວມກັບ ອົງການບໍລິຫານພາສີ ແຫ່ງ ສປ ຈີນ ກ່ຽວກັບ ເງື່ອນໄຂດ້ານສຸຂານາໄມພືດ ສຳລັບ ການສົ່ງອອກ ສາລີ ຈາກ ສປປ ລາວ ໄປ ສປ ຈີນ ເຊິ່ງໃນປະຈຸບັນເຫັນວ່າພື້ນທີ່ປູກສາລີ ມີການຂະຫຍາຍຕົວຢ່າງກວ້າງຂວາງເຊິ່ງສາມາດ ສ້າງລາຍຮັບໃຫ້ປະຊາຊົນ ແລະ ປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໄດ້ເປັນຢ່າງດີ. ແຕ່ການການຈັດຕັ້ງປະຕິບັດດັ່ງກ່າວ ຍັງບໍ່ທັນສອດຄ່ອງກັບຂໍ້ກຳນົດເງື່ອນໄຂ ທີ່ລັດຖະບານສອງຝ່າຍລົງນາມກັນເທື່ອ ເປັນຕົ້ນ ລະບົບການຜະລິດ, ລະບົບການຕິດຕາມ, ການຈັດການສັດຕູພືດໃນສວນປູກ, ຂັ້ນຕອນການບຳບັດ, ການຈັດການຄວາມສະອາດ ໂຮງເຮືອນຫຸ້ມຫໍ່ບັນຈຸ ແລະ ການຈົດບັນທຶກ.

ສະນັ້ນ, ເພື່ອໃຫ້ການຄຸ້ມຄອງການຜະລິດ ແລະ ການສົ່ງອອກ ສາລີ ຈາກ ສປປ ລາວ ໄປ ສປ ຈີນ ທັນເຂົ້າສູ່ລະບົບ, ມີຄວາມເປັນເອກະພາບ, ໂປ່ງໃສ ແລະ ສອດຄ່ອງກັບ ອະນຸສັນຍາສອງຝ່າຍ ກ່ຽວກັບ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການສົ່ງອອກສາລີ ຈາກ ສປປ ລາວ ໄປ ສປ ຈີນ ພ້ອມທັງ ກົດໝາຍ, ລະບຽບການ ແລະ ສົນທິສັນຍາການປ້ອງກັນພືດສາກົນ ທີ່ ສປປ ລາວ ແລະ ສປ ຈີນ ເປັນພາຄີ ນັ້ນ;

**ກົມປູກຝັງ ອອກຄຳແນະນຳ:**

**I. ຈຸດປະສົງ**

- ເພື່ອປະຕິບັດຕາມ ຂໍ້ກຳນົດເງື່ອນໄຂສຸຂານາພືດ ສຳລັບ ການສົ່ງອອກສາລີ ຈາກ ສປປ ລາວ ໄປ ສປ ຈີນ;

- ເພື່ອໃຫ້ຄຳແນະນຳ ກ່ຽວກັບ ຂັ້ນຕອນ ແລະ ວິທີການປະຕິບັດເງື່ອນໄຂດ້ານສຸຂານາພືດ ສຳລັບການສົ່ງອອກ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

## II. ເງື່ອນໄຂດ້ານສຸຂານາໄມພືດ ສຳລັບ ການສົ່ງອອກສາລີ ຈາກ ສປປ ລາວ ໄປ ສປ ຈີນ

### 1. ສາລີ ທີ່ຈະສົ່ງອອກ

ສາລີ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ພາຍໃຕ້ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຕ້ອງເປັນຊະນິດພັນ ສາລີແຂງ ມີຊື່ວິທະຍາສາດ *Zea mays* L, ຊື່ສາມັນພາສາອັງກິດ maize ເປັນສາລີທີ່ສີເອົາແຕ່ ເມັດ ຫຼື ແກ່ນ ຜ່ານການຕາກແຫ້ງ ຫຼື ອົບແຫ້ງ ຖ້າແນວພັນສາລີທີ່ນຳມາປູກເພື່ອສົ່ງອອກໄປ ສປ ຈີນ ເປັນແນວພັນທີ່ຕັດແຕ່ງທາງພັນທຸກຳຕ້ອງມີໃບອະນຸຍາດຮັບຮອງຄວາມປອດໄພ ການຕັດຕໍ່ພັນທຸກຳ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ໄປຈາກ ສປ ຈີນ ກ່ອນ.



### 2 ສັດຕູພືດກັກກັນ

ສາລີ ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ຕ້ອງບໍ່ເຈືອປົນດິນ ແລະ ເມັດພືດຊະນິດອື່ນ ແລະ ບໍ່ຕິດແປດສັດຕູພືດກັກກັນ ທີ່ຝ່າຍຈີນ ກຳນົດໄວ້ ຄືດັ່ງລຸ່ມນີ້:

| ລ/ດ | ຊື່ວິທະຍາສາດ | ຊື່ສາມັນ | ລັກສະນະຮູບຮ່າງ | ຮູບພາບປະກອບ |
|---|---|---|---|---|
| 1 | *Carpophilus hemipterus* | Dried fruit beetle (ມອດໝາກໄມ້ແຫ້ງ) | ມອດຊະນິດນີ້ມີລັກສະນະເດັ່ນຄືປີກສັ້ນ ປີກດ້ານລຸ່ມເປັນສີເຫຼືອງອ່ອນ ປາຍໜອດມີລັກສະນະຄືລູກຕຸ້ມ, ໂຕອ່ອນເປັນສີເຫຼືອງອ່ອນ ສ່ວນກົ້ນ ແລະ ຫົວເປັນສີນ້ຳຕານ. ເຂົ້າທຳລາຍໃນໄລຍະເປັນເມັດແກ່ ແລະ ຫຼັງການເກັບກ່ຽວ. |  |
| 2 | *Cryptolestes ferrugineus* | Rusty grain beetle (ມອດຂີ້ໝ້ຽງ) | ມອດຂີ້ໝ້ຽງ ໂຕແກ່ເປັນສີນ້ຳຕານ ໂຕອ່ອນເປັນດ້ວງສີຂາວ ລຳໂຕຮຽວຍາວ ສ່ວນຫົວ ແລະ ກົ້ນເປັນສີນ້ຳຕານ ທັງໂຕອ່ອນ ແລະ ໂຕແກ່ເປັນສັດຕູພືດໃນເລົ້າສາງ. ເຂົ້າທຳລາຍໃນໄລຍະຫຼັງການເກັບກ່ຽວ. |  |

| | | | | |
|---|---|---|---|---|
| 3 | *Cryptolestes pusilloides* | ມອດໜວດລູກຕຸ້ມ | ມອດໜວດລູກຕຸ້ມ ໂຕແກ່ເປັນສີນ້ຳຕານ ລັກສະນະເດັ່ນຄືມີໜວດຍາວ ກວ່າເຄິ່ງໜຶ່ງຂອງລຳໂຕໜວດມີ 11 ປ້ອງ ສຳລັບໂຕອ່ອນມີລັກສະນະຄ້າຍຄືມອດຂີ້ໝ້ຽງ ທັງໂຕອ່ອນ ແລະ ໂຕແກ່ເປັນສັດ ຕູພືດໃນເລົ້າສາງ. ເຂົ້າທຳລາຍໃນໄລຍະຫຼັງການເກັບກ່ຽວ. |  |
| 4 | *Cercospora sorghi* | Grey leaf spot of sorghum (ພະຍາດໃບຈຸດສີເທົາ) | ພະຍາດໃບຈຸດເທົາ ໃນສາລີ ເກີດຈາກເຊື້ອຣາ *Cercospora sorghi* ເຊື້ອພະຍາດດັ່ງກ່າວເຂົ້າທຳລາຍ ສ່ວນໃບ, ລຳຕົ້ນ ແລະ ແກ່ນ ສີຜິດປົກກະຕິ, ເຊວຕາຍ ແລະ ມີເຊື້ອ ຣາເກີດຂຶ້ນ ຖ້າອຸນຫະພູມ ແລະຄວາມຊຸ່ມເໝາະສົມ. ເຂົ້າທຳລາຍໃນໄລຍະເປັນຕົ້ນອ່ອນເຖິງເກັບກ່ຽວ ແລະ ຍັງຕິດແປດໄປກັບແກ່ນສາລີ. |  |
| 5 | *Peronosclerospora* sp. | Downy mildew ພະຍາດຣານ້ຳໝອກ | ພະຍາດຣານ້ຳໝອກ ເກີດຈາກເຊື້ອຣາ*Peronosclerospora* sp ເຊື້ອພະຍາດດັ່ງກ່າວເຂົ້າທຳລາຍ ແລະ ສະແດງອາການຢູ່ ສ່ວນໃບ ແລະ ແກ່ນ ໃບທີ່ຖືກທຳລາຍເປັນສີຂາວ, ແກ່ນເປັນສີເທົາ. ເຂົ້າທຳລາຍໃນໄລຍະເປັນຕົ້ນອ່ອນເຖິງການເກັບກ່ຽວ ແລະ ຍັງຕິດແປດໄປກັບແກ່ນສາລີ. |  |
| 6 | *Cemchrus echinatus* | Southern sandbur (ຫຍ້າໝາກໜາມ) | ເປັນພືດໃບລ້ຽງດ່ຽວ ນອນໃນຕະກູນຫຍ້າ ເປັນພືດລະດູດຽວ ມີຮາກຕາມຂໍ້ ມີລວງສູງປະມານ 50 ຊມ ມີໝາກເປັນລັກສະ ນະໜາມແຫຼມ ໜຶ່ງໝາກມີ 2-3 ແກ່ນ. ມີຜົນທົບເລີ່ມແຕ່ໄລຍະປູກ ເຖິງເກັບກ່ຽວ ແລະ ແກ່ນຫຍ້າຍັງຕິດໄປກັບຜະລິດຕະພັນສາລີ. |  |
| 7 | *Chromolaena odorata* | Siam weed (ຫຍ້າຂີ້ວ) | ເປັນພືດລົ້ມລຸກ ລຳຕົ້ນແຕກກິ່ງງ່າເປັນພຸ່ມ ມີລວງສູງປະມານ 1-2 ມ ດອກເປັນຊໍ່ສີຂາວ ຫຼື ມ້ວງ ມີດອກຍ່ອຍ 10-35 ດອກ ມີແກ່ນເປັນ ຫ້າຫຼ່ຽມ ແລະ ມີຂົນແຂງຢູ່ດ້ານເທິງຂອງແກ່ນ. ມີຜົນທົບເລີ່ມແຕ່ໄລຍະປູກ ເຖິງເກັບກ່ຽວ ແລະ ແກ່ນຫຍ້າຍັງສາມາດຕິດໄປກັບຜະລິດຕະພັນສາລີ. |  |

### 3. ການຈັດການສວນປູກ

ການປູກສາລີ ເພື່ອສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ ຕ້ອງມີມາດຕະການເຝົ້າລະວັງສັດຕູພືດກັກກັນ ແລະ ມີການຈັດການສວນແບບປະສົມປະສານ ດັ່ງນີ້:

1) ການຈັດການສັດຕູພືດກັກກັນ ໃນສວນປູກຕ້ອງມີການຈັດການສັດຕູພືດແບບປະສົມປະສານ (IPM) ເຊັ່ນ: ການໃຊ້ກັບດັກຟີລາໂມນ ແລະ ກາວເຫຼືອງ, ການອານາໄມສວນ ແລະ ຮັກສາຄວາມສະອາດ, ອານຸລັກແມງໄມ້ທີ່ເປັນປະໂຫຍດ ຖ້າພົບເຫັນສັດຕູພືດ ຄວນນຳໃຊ້ວິທີກາຍະພາບ ໂດຍການເກັບທຳລາຍແມງໄມ້ສັດຕູພືດຖິ້ມ ຫຼື ນຳໃຊ້ວິທີການອື່ນທີ່ເໝາະສົມ;
2) ຜູ້ປະກອບການຕ້ອງມີການບັນທຶກລະອຽດ ກ່ຽວກັບ ການຕິດຕາມ ແລະ ການຈັດການສັດຕູພືດ ເຊັ່ນ: ຊື່ສານເຄມີ, ລະດູການນຳໃຊ້, ສານອອກລິດ, ປະລິມານນຳໃຊ້, ຈຳນວນຄັ້ງນຳໃຊ້ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ. ການບັນທຶກເອກະສານຕ້ອງເກັບຮັກສາໄວ້ເປັນຢ່າງດີ ແລະ ໃຫ້ມີພ້ອມໃນເວລາກວດກາຂອງເຈົ້າໜ້າທີ່.

### 4. ໂຮງເຮືອນຫຸ້ມຫໍ່ບັນຈຸ

ການຈັດການພາຍໃນ ໂຮງເຮືອນຫຸ້ມຫໍ່ບັນຈຸ ຕ້ອງປະຕິບັດ ດັ່ງລຸ່ມນີ້:

1) ຕ້ອງມີລານຕາກ ຫຼື ໂຮງອົບທີ່ສະອາດ ເພື່ອຮັບປະກັນສາລີທີ່ຈະສົ່ງອອກບໍ່ຕິກໂມະ, ປົນເປື້ອນ ຈາກດິນ ແລະ ແກ່ນຫຍ້າ;
2) ວັດສະດຸຫຸ້ມຫໍ່ບັນຈຸຕ້ອງສະອາດ, ບໍ່ເຄີຍນຳໃຊ້ມາກ່ອນ ແລະ ຕ້ອງສອດຄ່ອງກັບເງື່ອນໄຂສຸຂານາໄມພືດທີ່ກ່ຽວຂ້ອງ ທີ່ ສປ ຈີນ ກຳນົດ;
3) ແຕ່ລະພາຊະນະຫຸ້ມຫໍ່ບັນຈຸ ຕ້ອງພິມ ຫຼື ຕິດສະຫຼາກ ຂະໜາດຕົວອັກສອນທີ່ຈະແຈ້ງໃສ່ດ້ານຂ້າງ ແລະ ດ້ານເທິງ. ເນື້ອໃນສະຫຼາກຕ້ອງຂຽນເປັນພາສາອັງກິດ/ຈີນ ໂດຍລະບຸແຈ້ງ ປະເທດນຳເຂົ້າ ພ້ອມທັງລະບຸແຈ້ງຂໍ້ມູນ ຊື່ບໍລິສັດສົ່ງອອກ, ຊື່ແນວພັນ, ລະຫັດສວນປູກ, ລະຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີຫຸ້ມຫໍ່.
4) ພາຍຫຼັງຫຸ້ມຫໍ່ບັນຈຸຜົນຜະລິດສຳເລັດ ໃຫ້ແຍກເກັບຮັກສາໄວ້ໃນສະຖານທີ່ສະອາດ ເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນອື່ນ;

### 5. ການຂຶ້ນທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍຂຶ້ນທະບຽນ ຫຼື ຂໍຕໍ່ໃບທະບຽນ ສວນປູກ, ໂຮງເຮືອນຫຸ້ມຫໍ່ບັນຈຸ ແລະ ໂຮງເຮືອນອົບອາຍເຢັນ ແມ່ນປະຕິບັດຕາມລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ທີ່ປະກາດໃຊ້ແຕ່ລະໄລຍະ ໂດຍຍື່ນຄຳຮ້ອງເຖິງກົມປູກຝັງໃນເດືອນ **ພຶດສະພາ** ຂອງທຸກປີ.

ຄຳຮ້ອງຂໍຂຶ້ນທະບຽນ ປະກອບມີ:

1) ໃບຄຳຮ້ອງ ຕາມແບບພິມທີ່ກົມປູກຝັງກຳນົດ;
2) ສຳເນົາ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້;
3) ສຳເນົາ ໃບຢັ້ງຢືນການມອບພັນທະອາກອນປະຈຳປີສຸດທ້າຍ;
4) ຄູ່ມືດຳເນີນງານ ກ່ຽວກັບ ການຈັດການດ້ານສຸຂານາໄມ ແລະ ສຸຂານາໄມພືດ;
5) ໃບມອບສິດ ແລະ ສຳເນົາບັດປະຈຳຕົວຂອງຜູ້ຍື່ນເອກະສານ ໃນກໍລະນີ ໃຫ້ຜູ້ອື່ນຍື່ນຄຳຮ້ອງແທນ.

ອາຍຸຂອງໃບທະບຽນນໍາໃຊ້ໄດ້ ໜຶ່ງ ປີ ແລະ ສາມາດຕໍ່ໄດ້. ຜູ້ທີ່ໄດ້ຮັບຂຶ້ນທະບຽນ ແລະ ຮັບຮອງໃຫ້ເປັນຜູ້ສົ່ງອອກ ຈະຖືກເຜີຍແຜ່ ໃນເວັບໄຊ ຂອງອົງການບໍລິຫານ ພາສີ ແຫ່ງ ສປ ຈີນ ຊຶ່ງມີຂໍ້ມູນ ຊື່, ທີ່ຢູ່ ແລະ ເລກລະຫັດ.

## 6. ມາດຕະການສຸຂານາໄມພືດ ກ່ອນສົ່ງອອກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດຮັບການຮັບຮອງໃຫ້ເປັນຜູ້ສົ່ງອອກ ຈາກອົງການບໍລິຫານພາສີ ແຫ່ງ ສປ ຈີນ ຕ້ອງປະຕິບັດ ດັ່ງນີ້:

1) ຕ້ອງຍື່ນຄໍາຮ້ອງ ຕາມແບບພິມທີ່ກົມປູກຝັງກໍານົດ ພ້ອມທັງຄັດຕິດເອກສານທີ່ກ່ຽວຂ້ອງ ເຖິງກົມປູກຝັງ ຫຼື ຂະແໜງປູກຝັງຂັ້ນແຂວງ. ສໍາລັບ ເງື່ອນໄຂ, ຂັ້ນຕອນ ແລະ ວິທີການ ສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ແມ່ນໃຫ້ປະຕິບັດ ຕາມບົດແນະນໍາ ຂອງກົມປູກຝັງ ເລກທີ 2880/ກປຝ, ລົງວັນທີ 11 ທັນວາ 2019;
2) ການສຸ່ມຕົວຢ່າງໜຶ່ງປີທໍາອິດ ຕ້ອງສຸ່ມເກັບ ແລະ ກວດຕົວຢ່າງ ໃນອັດຕາ ສອງ ສ່ວນຮ້ອຍ ຂອງແຕ່ລະຊຸດສິນຄ້າ, ຖ້າຫາກບໍ່ພົບສັດຕູພືດກັກກັນ ຂອງ ສປ ຈີນ ແມ່ນໃຫ້ຫຼຸດລົງໃນອັດຕາ ໜຶ່ງ ສ່ວນຮ້ອຍ ໃນປີທີສອງ. ພາຍຫຼັງການສຸ່ມກວດໃນອັດຕາ ໜຶ່ງ ຫຼື ສອງ ສ່ວນຮ້ອຍ ໃຫ້ສຸ່ມເອົາ ສາມ ກິໂລ ເພື່ອນໍາມາກວດຫາສັດຕູພືດກັກກັນ;
3) ກໍລະນີ ກວດກາພົບສັດຕູພືດກັກກັນ ທີ່ກໍານົດໄວ້ໃນໂຮແມ່ງ II ຂໍ້ທີ 2 ຂອງຄໍາແນະນໍາສະບັບນີ້ ແມ່ນຫ້າມສົ່ງອອກຊຸດສິນຄ້າດັ່ງກ່າວ ແລ້ວລາຍງານໃຫ້ກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້ຊາບທັນທີ ເພື່ອໂຈະສະຖານທີ່ປະກອບການຜະລິດ ພ້ອມຊອກຫາວິທີແກ້ໄຂ;
4) ໃນກໍລະນີ ເຈົ້າໜ້າທີ່ກັກກັນພືດທີ່ຮັບຜິດຊອບ ກວດກາບໍ່ພົບເຫັນການຕິດແປດສັດຕູພືດກັກກັນ ຕ້ອງອອກໃບຢັ້ງຢືນສຸຂານາມພືດ ສໍາລັບ ຊຸດສິນຄ້ານັ້ນ ແລະ ຕ້ອງພິມຂໍ້ມູນເພີ່ມຕື່ມ (Additional Declare) ຂອງໃບຢັ້ງຢືນສຸຂານາໄມພືດ ວ່າ: "The consignment is in compliance with requirements described in the protocol of phytosanitary requirements for the exports of maize from Lao to China is free of soil and quarantine pests concerned by China";
5) ເຈົ້າໜ້າທີ່ກັກກັນພືດທີ່ຮັບຜິດຊອບອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບ ສາລີ ຕ້ອງລະບຸຂໍ້ມູນ ດ່ານນໍາເຂົ້າ ທີ່ກໍານົດໂດຍ ອົງການພາສີ ແຫ່ງ ສປ ຈີນ ໃນແຕ່ລະໄລຍະ.

## 7. ຂໍ້ກໍານົດ ຢູ່ດ່ານຂາເຂົ້າ

1) ເມື່ອຊຸດສິນຄ້າ ສາລີ ຈາກ ສປປ ລາວ ມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ, ເຈົ້າຂອງຊຸດສິນຄ້າ ຕ້ອງແຈ້ງເອກະສານ ຕໍ່ເຈົ້າໜ້າທີ່ກັກກັນພືດ ຂອງ ສປ ຈີນ ເພື່ອດໍາເນີນການກວດກາເອກະສານທີ່ກ່ຽວຂ້ອງ ແລະ ບົດບັນທຶກ ກ່ຽວກັບ ການຈໍາແນກ ແລະ ການກັກກັນພືດ ພ້ອມທັງດໍາເນີນຕາມມາດຕະການກັກກັນພືດ ຂອງ ສປ ຈີນ.
2) ການຂົນສົ່ງຊຸດສິນຄ້າທີ່ມາຈາກ ສະຖານທີ່ປະກອບການຜະລິດ ເປັນຕົ້ນ ສວນປູກ ແລະ ໂຮງເຮືອນຫຸ້ມຫໍ່ບັນຈຸ ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ຮັບຮອງ ທັງສອງຝ່າຍ ແມ່ນຫ້າມນໍາເຂົ້າຢ່າງເດັດຂາດ;
3) ຖ້າຊຸດສິນຄ້າປົນເປື້ອນດິນ, ເມັດພືດຊະນິດອື່ນ ແລະ ກວດກາພົບສັດຕູພືດທີ່ໄດ້ກໍານົດໄວ້ໃນ ໂຮແມ່ງ II, ຂໍ້ທີ 2 ຂອງຄໍາແນະນໍາສະບັບນີ້ ຊຸດສິນຄ້າດັ່ງກ່າວຈະຖືກສົ່ງກັບ, ທໍາລາຍ ຫຼື ນໍາໃຊ້ມາດຕະການທາງດ້ານກັກກັນ ແລະ ກໍາຈັດສັດຕູພືດ ທີ່ມີປະສິດທິພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ. ເຈົ້າຫນ້າທີ່ຈີນຈະແຈ້ງ ໃຫ້ຝ່າຍລາວຮັບຊາບທັນທີ ກ່ຽວກັບຊະນິດສັດຕູພືດ, ເລກທີໃບຢັ້ງຢືນສຸຂານາໄມພືດ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ພ້ອມທັງໂຈະການນໍາເຂົ້າ ສາລີ ຈາກສວນປູກ ແລະ/ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸນັ້ນ. ຜູ້ປະກອບການຕ້ອງຊອກຫາສາຍເຫດ ແລະ ນໍາໃຊ້ມາດຕະການທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

**III. ການຈັດຕັ້ງປະຕິບັດ**

1) ໃຫ້ ພະແນກກັກກັນພືດ, ຂະແໜງປູກຝັງແຂວງ, ນະຄອນຫຼວງ ເປັນເຈົ້າການ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2) ໃຫ້ ພະແນກກັກພືດ ປະສານສົມທົບກັບ ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ເພື່ອກວດກາ ແລະ ປະເມີນຄວາມສ່ຽງສັດຕູພືດ ສະຖານທີ່ປະກອບການຜະລິດ ໃນແຕ່ລະຊ່ວງລະດູການຜະລິດ ພ້ອມສົ່ງລາຍຊື່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ສະເໜີສົ່ງອອກສາລີ ທີ່ຈັດຕັ້ງປະຕິບັດຖືກຕ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ທີ່ສອງຝ່າຍລົງນາມກັນ ໃຫ້ ສປ ຈີນ ພິຈາລະນາ **ໜຶ່ງ ຄັ້ງ/ປີ**;
3) ໃຫ້ ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບກົມປູກຝັງ ຊຸກຍູ້ຕິດຕາມບັນດາບໍລິສັດ ໃນການຈັດຕັ້ງປະຕິບັດ ການປ້ອງກັນ ແລະ ກຳຈັດສັດຕູພືດໃນສວນສາລີ, ຕິດຕາມເຝົ້າລະວັງສັດຕູພືດຢູ່ສວນປູກ, ໂຮງເຮືອນຫຸ້ມຫໍ່ ແລະ ມາດຕະການລຸດຜ່ອນຄວາມສ່ຽງການຕິດແປດສັດຕູພືດກັກກັນຂອງ ສປ ຈີນ ທີ່ກຳນົດໄວ້ໃນໂຮແມ່ງ II ຂໍ້ທີ 2 ຂອງຄຳແນະນຳສະບັບນີ້ ພ້ອມທັງລາຍງານໃຫ້ ກົມປູກຝັງ ຊາບເປັນແຕ່ລະໄລຍະ;
4) ໃຫ້ ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ເປັນເຈົ້າການ ຊຸກຍູ້, ຕິດຕາມ, ກວດກາ ການນຳໃຊ້ປັດໄຈການຜະລິດ (ແນວພັນ, ຝຸ່ນ, ຢາປາບສັດຕູພືດ ແລະ ເຄື່ອງມືອຸປະກອນຮັບໃຊ້ການຜະລິດ) ພ້ອມທັງລາຍງານໃຫ້ກົມປູກຝັງຊາບເປັນແຕ່ລະໄລຍະ.
5) ໃຫ້ ພະແນກກັກກັນພືດ ເປັນໃຈກາງປະສານສົມທົບກັບ ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ແລະ ສາຍຕັ້ງຂອງຕົນ ສະຫຼຸບລາຍງານ ກ່ຽວກັບ ການສົ່ງອອກສາລີ ຈາກ ສປປ ລາວ ໄປ ສປ ຈີນ ໃຫ້ກົມປູກຝັງຊາບ ເປັນແຕ່ລະໄລຍະ;
6) ໃຫ້ ເຈົ້າໜ້າທີ່ກັກກັນພືດ ເຂັ້ມງວດໃນການກວດກາ ແລະ ຢັ້ງຢືນສຸຂານາໄມພືດ ການສົ່ງອອກສາລີ ຕາມຫຼັກວິຊາການ.
7) ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ຮີບຮ້ອນລາຍງານ ກົມປູກຝັງ ຕາມຂັ້ນຕອນ ເພື່ອພິຈາລະນາ ຫາວິທີແກ້ໄຂຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

**ບຸນຈັນ ກົມບຸນຍະສິດ**